**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ເລກທີ 6312 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 4 ກັນຍາ 2024

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ ລົງວັນທີ 18 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 289/ຈຕ, ລົງວັນທີ 24 ມິຖຸນາ 2024.

**ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ແນ່ໃສ່ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍ, ຍຸດທະສາດ, ແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນພັດທະນາ ເຕັກໂນໂລຊີຂ່າວສານ ແລະ ການສື່ສານ (ໄອຊີທີ) ສຳລັບວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ຂອງແຂວງ, ນະຄອນຫຼວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ເປັນຫົວໜ່ວຍວິຊາການໜຶ່ງ ທີ່ມີພາລະບົດບາດເປັນເສນາທິການ ໃຫ້ແກ່ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ໃນການ ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໄອຊີທີ ສຳລັບວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ພາຍໃນແຂວງ, ນະຄອນຫຼວງ ໃຫ້ສອດຄ່ອງກັບຄວາມຕ້ອງການ ທາງດ້ານປະລິມານ ແລະ ຄຸນນະພາບ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄໍາສັ່ງຂອງພັກ, ກົດໝາຍຂອງລັດ, ທິດທາງ ແຜນການ ແລະ ຍຸດທະສາດ ຂອງກະຊວງສຶກສາທິການ ແລະ ກິລາ ເພື່ອສ້າງແຜນ ພັດທະນາ ໄອຊີທີ ສໍາລັບ ວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ຂອງແຂວງ;
2. ສ້າງ ແລະ ປັບປຸງນິຕິກໍາ, ລະບຽບການ ແລະ ມາດຕະຖານຕ່າງໆ ໃນການຄຸ້ມຄອງ ໄອຊີທີ ສໍາລັບ ວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ພາຍໃນແຂວງ;
3. ສ້າງຄວາມເຂັ້ມແຂງທາງດ້ານ ໄອຊີທີ ໃຫ້ແກ່ ຄູ ແລະ ບຸກຄະລາກອນ ໃນຂະແໜງການສຶກສາ ທິການ ແລະ ກິລາ ໃນຂັ້ນຂອງຕົນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕາມການແບ່ງ ຂັ້ນຄຸ້ມຄອງ;
4. ພັດທະນາ, ຄຸ້ມຄອງ, ຊຸກຍູ້ ແລະ ສົ່ງເສີມ ການນໍາໃຊ້ ໄອຊີທີ ສໍາລັບການຄຸ້ມຄອງບໍລິຫານ, ການຮຽນ-ການ ສອນ ແລະ ການຄົ້ນຄວ້າວິໄຈ ຂອງຂະແໜງການ ສຶກສາທິການ ແລະ ກິລາ ພາຍໃນແຂວງ;
5. ໃຫ້ບໍລິການດ້ານວິຊາການ ໄອຊີທີ ສໍາລັບວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ແກ່ບັນດາ ສະຖານການສຶກສາ ແລະ ໜ່ວຍງານອື່ນ ທັງພາກລັດ ແລະ ເອກະຊົນ;
6. ຊີ້ນໍາ ແລະ ປະສານງານທາງດ້ານວິຊາການ ໄອຊີທີ ຂອງບັນດາ ເມືອງ ແລະ ສະຖານການສຶກສາ ແຫ່ງຕ່າງໆ ພາຍໃນແຂວງ;
7. ເປັນກອງເລຂາຊ່ວຍວຽກຂອງພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ໃນຄະນະ ກໍາມະການຄຸ້ມ ຄອງອິນເຕີເນັດ ຂັ້ນແຂວງ;
8. ພົວພັນ ແລະ ປະສານງານກັບ ບັນດາຂະແໜງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ, ສະຖານການສຶກສາ ແລະ ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ຕາມການມອບໝາຍ ຂອງຂັ້ນເທິງ;
9. ກວດກາ, ຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃນແຕ່ລະໄລຍະ;
10. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ.

**ມາດຕາ 4 ຂອບເຂດສິດ**

ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ມີຂອບເຂດສິດ ດັ່ງນີ້:

1. ສະເໜີແຜນການ ແລະ ແຜນງົບປະມານ ເພື່ອພັດທະນາວຽກງານທີ່ຕົນ ຮັບຜິດຊອບຕໍ່ພະແນກ ສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ;

2. ສະເໜີພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ພິຈາລະນາ ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກ ບັນດານິຕິກຳຄຸ້ມຄອງການສຶກສາ ແລະ ກິລາ ທີ່ບໍ່ສອດຄ່ອງ;
3. ສະເໜີພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ພິຈາລະນາ ອະນຸມັດ, ສ້າງຕັ້ງ, ໂຮມ ຫຼື ຍົກເລີກ ໜ່ວຍງານຕ່າງໆ ທີ່ຂຶ້ນກັບການຄຸ້ມຄອງ ຂອງສູນ;
4. ສະເໜີພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ພິຈາລະນາ ການບັນຈຸ, ສັບຊ້ອນ, ຍົກຍ້າຍ,ແຕ່ງຕັ້ງ ແລະ ປົດຕຳແໜ່ງພະນັກງານ-ລັດຖະກອນ ພາຍໃນສູນ ຕາມກົດໝາຍ ແລະ ລະບຽບການ;
5. ສະເໜີການຍ້ອງຍໍ, ປະຕິບັດນະໂຍບາຍຕ່າງໆ ຕໍ່ຜູ້ມີຜົນງານ ແລະ ປະຕິບັດວິໄນ ພະນັກງານ ລັດຖະກອນ ພາຍ ໃນສູນ ຕາມກົດໝາຍ ແລະ ລະບຽບການ;
6. ຄຸ້ມຄອງ ແລະ ນຳໃຊ້ ງົບປະມານ, ວັດຖຸ, ຊັບສິນ, ກອງທຶນ ແລະ ທຶນຊ່ວຍເຫຼືອ ປະເພດຕ່າງໆ ຕາມການ ອະນຸມັດຂອງພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ;
7. ຮຽກໂຮມປະຊຸມ, ປຶກສາຫາລື ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານ ໄອຊີທີ ສໍາລັບການ ສຶກສາ ແລະ ກິລາ ຕາມພາລະບົດບາດ ຂອງຕົນ;
8. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງ ທັງພາກລັດ ແລະ ເອກະ ຊົນ ຕາມການອະນຸມັດຂອງພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ;
9. ສະເໜີພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ປົກປ້ອງ, ຄຸ້ມຄອງ ບຸກຄະລາກອນ , ຊັບສິນ, ລິ ຂະສິດທາງດ້ານການສຶກສາ ແລະ ກິລາ;
10. ປະຕິບັດສິດອື່ນ ຕາມການມອບໝາຍຂອງ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ປະກອບມີ 3 ໜ່ວຍງານ ຄື:

1. ໜ່ວຍງານບໍລິຫານ ແລະ ສົ່ງເສີມການບໍລິຫານຄຸ້ມຄອງ ແບບເອເລັກໂຕຣນິກ;
2. ໜ່ວຍງານຄຸ້ມຄອງລະບົບເຄືອຂ່າຍ;
3. ໜ່ວຍງານສົ່ງເສີມການຮຽນ-ການສອນ ແບບເອເລັກໂຕຣນິກ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ ແລະ ຕຳແໜ່ງງານ

ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ມີໂຄງປະກອບບຸກ ຄະລາ ກອນດັ່ງນີ້:

1. ຜູ້ອຳນວຍການສູນ 01 ທ່ານ, ຮັບຜິດຊອບຕໍ່ຫົວໜ້າ, ຮອງຫົວໜ້າ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ຊຶ່ງມີໜ້າທີ່ ແລະ ຂອບເຂດສິດ ຕາມທີ່ກຳນົດໄວ້ໃນ ມາດຕາ 3 ແລະ ມາດຕາ 4 ຂອງຂໍ້ຕົກລົງ ສະບັບນີ້;

ໃນເວລາ ຜູ້ອຳນວຍການສູນຕິດຂັດ ຕ້ອງມອບສິດໃຫ້ຮອງຜູ້ອຳນວຍການສູນ ຮັກສາການແທນ.

2. ມີຮອງຜູ້ອຳນວຍການສູນຈຳນວນໜຶ່ງ ເພື່ອຊ່ວຍຜູ້ອຳນວຍການສູນ ໃນການຊີ້ນຳວຽກງານ ຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງຜູ້ອຳນວຍການສູນ; ແລະ ຮອງຫົວໜ້າອຳນວຍການ ສູນເປັນຜູ້ຮັກສາການແທນ ໃນເວລາຜູ້ອຳນວຍການສູນຕິດຂັດ, ພ້ອມທັງລາຍງານວຽກງານທີ່ໄດ້ຈັດຕັ້ງ ປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຜູ້ອຳນວຍການສູນ ພາຍຫຼັງກັບມາປະຈຳການ;
3. ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຮັບຜິຊອບວຽກງານຕາມ ການກຳນົດຕຳແໜ່ງງານທີ່ຂັ້ນເທິງອານຸມັດ.

ສຳລັບການບັນຈຸສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບຫຼັກການ.

## ໝວດທີ 4
## ໜ້າທີ່ ຂອງແຕ່ລະໜ່ວຍງານ

**ມາດຕາ 7 ໜ້າທີ່ຂອງໜ່ວຍງານບໍລິຫານ ແລະ ສົ່ງເສີມການບໍລິຫານຄຸ້ມຄອງແບບເອເລັກໂຕຼນິກ**

ໜ່ວຍງານບໍລິຫານ ແລະ ສົ່ງເສີມການບໍລິຫານຄຸ້ມຄອງ ແບບເອເລັກໂຕຣນິກ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສັງລວມ ແລະ ສ້າງແຜນພັດທະນາວຽກງານພາຍໃນສູນ;
2. ຄຸ້ມຄອງ ເອກະສານ, ອັດສຳເນົາ, ສົ່ງເອກະສານ ແລະ ແຈ້ງຂ່າວພາຍໃນສູນ;
3. ຄຸ້ມຄອງງົບປະມານການເງິນ, ການນຳໃຊ້ຊັບສິນ, ພາຫະນະ, ອຸປະກອນ ແລະ ອື່ນໆພາຍໃນສູນ;
4. ສ້າງແຜນງົບປະມານ, ຄຸ້ມຄອງການນຳໃຊ້, ຕິດຕາມ ແລະ ສະຫຼຸບລາຍຮັບ-ລາຍຈ່າຍ ຂອງສູນເປັນແຕ່ລະ ໄລຍະ;
5. ຈັດຕັ້ງການປະເມີນຜົນງານ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງພະນັກງານ-ລັດຖະກອນ ພາຍໃນສູນ ຕາມລະບຽບການ;
6. ຄົ້ນຄວ້າການຂຽນຄູ່ມືວິທີການເຮັດວຽກ ແລະ ຕຳແໜ່ງງານຂອງສູນ;
7. ສະຫຼຸບ ແລະ ລາຍງານ ແຜນການເຄື່ອນໄຫວ ປະຈຳອາທິດ, ປະຈຳເດືອນ, ປະຈຳ 3 ເດືອນ, ປະຈຳ 6 ເດືອນ ແລະ ປະຈຳປີ ຂອງສູນ;
8. ຄົ້ນຄວ້າ, ສ້າງ ແລະ ນຳສະເໜີ ເພື່ອນຳໃຊ້ ຂໍ້ກຳນົດ, ກົດລະບຽບ ແລະ ບັນດາ ນິຕິກຳຕ່າງໆ ເພື່ອການພັດທະນາ , ການຄຸ້ມຄອງ, ການຈັດຕັ້ງປະຕິບັດ, ການສົ່ງເສີມ ແລະ ການບໍລິການວຽກງານ ໄອຊີທີ ສຳລັບການຄຸ້ມຄອງ ບໍລິຫານ ການສຶກສາ ແລະ ກິລາ ພາຍໃນແຂວງ;
9. ອອກແບບ, ສ້າງ, ປັບປຸງ, ຄຸ້ມຄອງ ແລະ ບໍລິການເວັບໄຊ ແລະ ລະບົບອີເມວ ສຳລັບຂະແໜງການສຶກສາທິ ການ ແລະ ກິລາ ພາຍໃນແຂວງ ແນໃສ່ການຕິດຕໍ່ສື່ສານ, ໂຄສະນາເຜີຍແຜ່ວຽກງານ ແລະ ກິດຈະກຳຕ່າງໆ ສຳລັບຂະແໜງສຶກສາທິການ ແລະ ກິລາ ໃນຂັ້ນຂອງຕົນ;
10. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ອອກແບບ, ພັດທະນາ ແລະ ປັບປຸງ ຊອບແວ ແລະ ລະບົບຖານຂໍ້ມູນສຳລັບ ການ ຄຸ້ມຄອງບໍລິຫານ ການສຶກສາ ແລະ ກິລາ ແບບເອເລັກໂຕຣນິກ;
11. ປະສານສົມທົບກັບບັນດາໜ່ວຍງານ ພາຍໃນສູນ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;

12. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນໜ່ວຍງານ ໃຫ້ຄະນະສູນ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
13. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະສູນ.

**ມາດຕາ 8 ໜ້າທີ່ຂອງໜ່ວຍງານຄຸ້ມຄອງລະບົບເຄືອຂ່າຍ**

ໜ່ວຍງານຄຸ້ມຄອງລະບົບເຄືອຂ່າຍ ມີໜ້າທີ່ດັ່ງນີ້:

1. ຄຸ້ມຄອງ ແລະ ບໍາລຸງຮັກສາພື້ນຖານໂຄງລ່າງ ICT ຂອງຂະແໜງການສຶກສາທິການ ແລະ ກິລາ ພາຍໃນແຂວງ;
2. ຄຸ້ມຄອງ, ພັດທະນາ ແລະ ໃຫ້ບໍລິການລະບົບເຄືອຂ່າຍສາຍສົ່ງ ສໍາລັບຂະແໜງການສຶກສາ ແລະ ກິລາ ພາຍໃນ ແຂວງ;
3. ຄົ້ນຄວ້າ, ພັດທະນາ ແລະ ຄຸ້ມຄອງມາດຕະຖານເຕັກນິກກ່ຽວກັບລະບົບ ICT ສໍາລັບວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ພາຍໃນແຂວງ;
4. ກໍານົດ ແລະ ຄຸ້ມຄອງລະຫັດ ຜູ້ຊົມໃຊ້ ລະບົບ ໄອຊີທີ ຂອງຂະແໜງການສຶກສາທິການ ແລະ ກິລາ ພາຍໃນ ແຂວງ ແນໃສ່ການຄຸ້ມຄອງ ແລະ ບໍລິການ, ປົກປ້ອງ, ສົ່ງເສີມ, ຕິດຕາມ ແລະ ກວດກາ ຜູ້ຊົມໃຊ້ ອິນທຣາເນັດ ແລະ ອິນເຕີເນັດ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ, ສົ່ງເສີມ, ພັດທະນາ, ປັບປຸງ, ຕິດຕາມ, ກວດກາ ແລະ ລາຍງານສະພາບການຄຸ້ມຄອງ, ນໍາໃຊ້ ແລະ ບໍລິການ ລະບົບຂ່າວສານສໍາລັບ ການສຶກສາ ແລະ ກິລາ;
6. ປະສານສົມທົບກັບບັນດາໜ່ວຍງານພາຍໃນສູນ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
7. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນໜ່ວຍງານ ໃຫ້ຄະນະສູນ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
8. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະສູນ.

**ມາດຕາ 9 ໜ້າທີ່ຂອງໜ່ວຍງານສົ່ງເສີມ ການຮຽນ-ການສອນແບບເອເລັກໂຕຣນິກ**

ໜ່ວຍງານສົ່ງເສີມ ການຮຽນ-ການສອນແບບເອເລັກໂຕຣນິກ ມີໜ້າທີ່ດັ່ງນີ້:

1. ຊຸກຍູ້ ແລະ ສົ່ງເສີມ ການອອກແບບ, ພັດທະນາ ແລະ ປັບປຸງຊອບແວສໍາລັບລະບົບການຈັດຕັ້ງການຮຽນ-ການ ສອນ, ການຝຶກອົບຮົມ ແລະ ການຄົ້ນຄວ້າວິໄຈແບບເອເລັກໂຕຣນິກ;
2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການນໍາໃຊ້ ໄອຊີທີ ເຂົ້າໃນການຜະລິດເນື້ອໃນສໍາລັບການຮຽນ ການສອນ, ການຝຶກອົບຮົມແບບເອເລັກໂຕຣນິກ;
3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອວາງແຜນ ແລະ ຈັດຕັ້ງຝຶກອົບຮົມ ຜູ້ບໍລິຫານ, ວິຊາການ, ຄູ, ອາຈານ, ນັກຮຽນ ແລະ ນັກສຶກສາ ພາຍໃນແຂວງ ກ່ຽວກັບການນໍາໃຊ້ ໄອຊີທີ ເຂົ້າໃນວຽກງານການຈັດຕັ້ງ ການຮຽນ-ການສອນ, ການຝຶກອົບຮົມ ແລະ ການຄົ້ນຄວ້າວິໄຈ;
4. ປະສານສົມທົບກັບບັນດາໜ່ວຍງານ ພາຍໃນສູນ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
5. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນໜ່ວຍງານ ໃຫ້ຄະນະສູນ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
6. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະສູນ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 10 ຫຼັກການ**

ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ເຄື່ອນໄຫວວຽກງານ ຕາມ ຫຼັກການດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງສູນ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍ ຫົວຄິດປະດິດ ສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ
3. ທຸກການເຄື່ອນໄຫວ ຂອງສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ແມ່ນ ອີງໃສ່ກົດໝາຍ, ລະບຽບການ, ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງ ນະໂຍບາຍຂອງພັກ ແລະ ລັດຖະບານ, ການນຳພາ-ຊີ້ນຳ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ມາຈັດຕັ້ງຜັນ ຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ແບບແຜນວິທີເຮັດວຽກ**

**ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ມີແບບແຜນວິທີເຮັດວຽກດັ່ງນີ້:**

1. ເຮັດວຽກມີ ແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ເປົ້າໝາຍໃນ ແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນ ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອ ຮັບປະກັນການຈັດຕັ້ງປະຕິບັດ ວຽກງານຂອງສູນໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ-ຊຸກຍູ້ ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຮັບ-ຜົນ ເສຍພ້ອມ ທັງລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳເດືອນ 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ຂັ້ນເທິງ ເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 12 ງົບປະມານ**

ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ມີງົບປະມານໄດ້ມາ ຈາກງົບປະມານ ຂອງພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ການຊ່ວຍເຫຼືອຂອງສັງຄົມ, ການຮ່ວມມືຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 13 ການຈັດຕັ້ງປະຕິບັດ**

ໃຫ້ບັນດາຫ້ອງການ, ກົມ, ອົງການທຽບເທົ່າກົມ, ສູນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ, ສະຖານການສຶກສາ ແລະ ພາກສ່ວນທີ່ ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ຜັນຂະຫຍາຍເປັນ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ຂັ້ນແຂວງ ສະເພາະຂອງຕົນ ເພື່ອນຳສະເໜີ ທ່ານເຈົ້າແຂວງ, ເຈົ້າຄອງນະຄອນ ອານຸມັດຕາມລະບຽບການ.

**ມາດຕາ 14 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນ ຂໍ້ຕົກລົງສະບັບເລກທີ 2870/ສສກ.ຈຕ, ລົງວັນທີ 22 ກໍລະກົດ 2013. ທຸກຂໍ້ຕົກລົງ ແລະ ເອກະສານຕ່າງໆຊຶ່ງປະກາດໃຊ້ໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນຖືກລົບລ້າງ.

**ລັດຖະມົນຕີ**

ຣສ. ປອ. ພຸດ ສິມມາລາວົງ

**ບ່ອນນຳສົ່ງ:**

1. ຫ້ອງການກະຊວງສຶກສາທິການແລະກິລາ 1 ສະບັບ
2. ບັນດາກົມ, ສະຖາບັນ ແລະ ສູນ ບ່ອນລະ 1 ສະບັບ
3. ພະແນກສຶກສາທິການ ແລະ ກິລາ ພາກສ່ວນລະ 1 ສະບັບ
4. ພາກສ່ວນທີ່ກ່ຽວຂ້ອງ 3 ສະບັບ
5. ເກັບມ້ຽນ 3 ສະບັບ